

# ເອກະລັກຂອງຊົນເຜົ່າ

# ມະກອງ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe’de’ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
## ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: "ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ". ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປຶ້ມກ່ຽວກັບຊົນເຜົ່າ ມະກອງ ຄືນໃໝ່ໂດຍແຍກຈາກປຶ້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າມະກອງ ໃນ ສປປ ລາວ. ປຶ້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ມະກອງ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ ແລະ ບາງປະເພນີ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ມະກອງ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕື່ມກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແຈກຢາຍພົນລະເມືອງ

ຊົນເຜົ່າ ມະກອງ ໄດ້ຕັ້ງພູມລຳເນົາຢູ່ ແຂວງ ຄຳມ່ວນ, ສະຫວັນນະເຂດ. ນອກຈາກນີ້, ຊົນເຜົ່າ ມະກອງ ຍັງມີຢູ່ປະເທດຫວຽດນາມ ຊຶ່ງເຂົາເຈົ້າເອີ້ນວ່າ: "ບູຣ-ເວີນກຽວ". ຢູ່ ສປປ ລາວ ມີປະຊາກອນທັງໝົດ 117.842 ຄົນ, ຍິງ 60.019 ຄົນ, ເທົ່າກັບ 2.1% ຂອງພົນລະເມືອງໃນທົ່ວປະເທດ.




● ຊົນເຜົ່າ ມະກອງ ທີ່ແຈກຢາຍຢູ່ແຕ່ລະບ່ອນ:

- ແຂວງ ຄຳມ່ວນ: ເມືອງ ນາກາຍ, ເມືອງ ຍົມມະລາດ, ເມືອງ ມະຫາໄຊ, ເມືອງ ທ່າແຂກ, ເມືອງ ໜອງບົກ, ເມືອງ ເຊບັ້ງໄຟ
- ແຂວງ ສະຫວັນນະເຂດ: ເມືອງ ອຸທຸມພອນ, ເມືອງ ອາດສະພັງທອງ, ເມືອງ ທ່າພະລານໄຊ, ເມືອງ ພິນ, ເມືອງເ ຊໂປນ, ເມືອງ ນອງ

# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າ ມະກອງ ແມ່ນຊົນເຜົ່າໜຶ່ງທີ່ນອນຢູ່ໃນວົງຄະນາຍາດແຫ່ງຊາດລາວ. ມີປະຫວັດຄວາມເປັນມາຄ້າຍຄືກັບບັນດາຊົນເຜົ່າໃນຕະກຸນ "ບຣູ" ໄດ້ຕັ້ງພູມລຳເນົາບົນດິນດອນຕອນນີ້ເປັນເວລາດົນນານແລ້ວ. ເຂົາເຈົ້າເຄື່ອນຍ້າຍເຂົ້າມາ ປະເທດລາວ ໂດຍຜ່ານແຄ້ວນທົ່ງສາວະດີປະເທດມຽນມາ ແລະ ເຂດລົບບູລີ ປະເທດສະຫຍາມ ມາຕັ້ງພູມລຳເນົາຢູ່ເຂດເມືອງ ນອງ ແຂວງ ສະຫວັນນະເຂດ ໃນສະໄໝເຈົ້າຈັນອານຸວົງຕົກມາໄລຍະໜຶ່ງ, ເນື່ອງຈາກມີສະພາບທຳມະຊາດ ແລະ ສັງຄົມໜີບຮັດຢ່າງໜັກໜ່ວງຈຶ່ງເຮັດໃຫ້ຊົນເຜົ່ານີ້ມີຈຳນວນໜຶ່ງເຄື່ອນຍ້າຍຈາກເມືອງນອງມາຕັ້ງພູມລຳເນົາຢູ່ຫຼາຍເມືອງທີ່ຂຶ້ນກັບແຂວງ ສະຫວັນນະເຂດ ແລະ ບາງເມືອງຂອງແຂວງ ຄຳມ່ວນ.

ຊົນເຜົ່ານີ້ເອີ້ນຕົນເອງວ່າ: "ບູຣມະກອງ" ຊົນເຜົ່າອື່ນເອີ້ນເຂົາເຈົ້າແມ່ນມະກອງ, ຊື່ທີ່ເຂົາເຈົ້າມັກ ແລະ ຊື່ທີ່ໃຊ້ທາງການໃນປັດຈຸບັນແມ່ນ ຊົນເຜົ່າ "ມະກອງ" ຊຶ່ງໝາຍຄວາມວ່າ: "ມະເອົາກອງມາໃຫ້" ແລະ ໃນປັດຈຸບັນຊົນເຜົ່າມະກອງປະກອບດ້ວຍຫຼາຍແຂງດ້ວຍກັນຄື: ມະກອງ, ຕຣູຍ, ພ້ວ, ມະຣ້ອຍ ແລະ ຕຣອງ ອາໄສຢູ່ໃນເວລານັ້ນ.

# ອາຊີບຂອງຊົນເຜົ່າ ມະກອງ

ຊົນເຜົ່າ ມະກອງ ໃນເມື່ອກ່ອນແມ່ນຖາງປ່າເຮັດໄຮ່ປູກເຂົ້າ, ເກັບເດັດຜັກປ່າ, ລ່າເນື້ອສັດປ່າ, ຫາປາຕາມທຳມະຊາດ, ລຽ້ງສັດປະເພດ: ຄວາຍ, ງົວ, ໝູ, ໝາ, ແບ້ ແລະ ສັດປີກ, ປູກພືດຊະນິດ ຕ່າງໆ. ປັດຈຸບັນຄົນ ມະກອງ ຢູ່ຫຼາຍບ່ອນໄດ້ຖືການເຮັດນາປູກເຂົ້າໜຽວເປັນຕົ້ນຕໍ, ປູກສາລີ, ມັນກໍ, ເຜືອກ ແລະ ອື່ນໆເປັນສຳຮອງ. ນອກຈາກນັ້ນ, ຍັງບໍ່ໄດ້ລືດລະໃນວິຊາຫັດຖະກຳຈັກສານ, ຕ່ຳ ຫູກ,

ທໍ່ໄໝ, ປັ້ນໝໍ້ຫຼໍ່ໄຫ ແລະ ໄດ້ມີຄວາມຊຳນານງານໃນວິຊາຕີເຫຼັກ ເພື່ອເຮັດເຄື່ອງມືໃນການຜະລິດ, ໃຊ້ສອຍໃນຄອບຄົວ ແລະ ໄດ້ແລກ ປ່ຽນສິ່ງຂອງອື່ນໆ ອີກດ້ວຍ.



ພາບໂດຍ: ກົມຊົນເຜົ່າ

# ທີ່ຕັ້ງບ້ານ ແລະ ເຮືອນ

ລັກສະນະເປັນເຮືອນຮ້ານນ້ອຍ, ສອດຄ່ອງກັບຖານະຂອງຄອບຄົວຊຶ່ງມີການຈັດວາງພາຍໃນເຮືອນເຊັ່ນ: ເຕົາໄຟ, ຫ້ອງນອນ ພໍ່ແມ່, ຫ້ອງນອນລູກແຕ່ງດອງແລ້ວ, ຫ້ອງນອນລູກຊາຍຍັງໂສດ ແລະ ຫ້ອງນອນຂອງແຂກທີ່ມາແວ່ຢາມ. ສ່ວນລູກສາວໃຫຍ່ບໍ່ທັນແຕ່ງດອງກໍໄປນອນຢູ່ເຮືອນໝູ່ຄູ່ຫຼືເຮືອນແມ່ຮ້າງນາງໝ້າຍ. ເຮືອນແຕ່ລະຫຼັງໃນບ້ານໜຶ່ງໆແມ່ນໄດ້ຈັດວາງເປັນວົງມົນ, ຢູ່ເຄິ່ງກາງບ້ານມີສາລາກວາ. ຊົນເຜົ່າ ມະກອງ ໄດ້ມີພິທີກຳໃນການເລືອກສະຖານທີ່ຕັ້ງບ້ານ ແລະ ການຂຶ້ນເຮືອນໃໝ່ລ້ວນແຕ່ມີການຈ້ຳຜີທັງໝົດ.



ທີ່ບ້ານ ອາລາງໃຫຍ່ ເມືອງ ເຊໂປນ ແຂວງສະຫວັນນະເຂດ
ພາບໂດຍ: ກົມຊົນເຜົ່າ



ທີ່ບ້ານ ອາລາງໃຫຍ່ ເມືອງ ເຊໂປນ ແຂວງສະຫວັນນະເຂດ
ພາບໂດຍ: ກົມຊົນເຜົ່າ

# ເຄື່ອງນຸ່ງຫົ່ມ

ກ່ອນໜ້ານີ້ 100 ກວ່າປີຜູ່ຊາຍແມ່ນນຸ່ງກະຕຽວ, ຈຶ່ງຜົມຍາວເກົ້າຜົມຄືແມ່ຍິງ, ບ່ອງຫູໃສ່ຕ້າງທີ່ເຮັດດ້ວຍເງິນ ແລະ ກົ່ວ, ຕັດແຂ້ວ, ສັກເອິກ, ຄາງ, ໜ້າລາຍທີ່ສະແດງເຖິງຄວາມເກັ່ງກ້າ ແລະ ຮັ່ງມີ. ສ່ວນແມ່ຍິງນຸ່ງສິ້ນ, ຫົ່ມເສື້ອ,ບ່ອງຫູ, ໃສ່ຕ້າງທີ່ເຮັດດ້ວຍເງິນ ແລະ ກົ່ວ, ຖືກະຈອນ, ກ້ອງແຂນ, ປອກຄໍ, ໝາກຕູ້ມ ແລະ ໝາກປັດ. ປັດຈຸບັນການນຸ່ງຫົ່ມເອ້ຢ້ອງຂອງຊົນເຜົ່າ ມະກອງ ໄດ້ມີການປ່ຽນແປງເຂົາເຈົ້າມີຄວາມນິຍົມນຸ່ງຖືຄືແບບຊົນເຜົ່າຜູ້ໄທ ແລະ ຊົນເຜົ່າລາວ.





ພາບໂດຍ: ກົມຊົນເຜົ່າ

# ອາຫານ ແລະ ເຄື່ອງດື່ມ

ສະໄໝບູຮານແມ່ນກິນເຂົ້າໜຽວ, ອາຫານທີ່ຂາດບໍ່ໄດ້ແມ່ນລາບເລືອດ, ແກງທີ່ມີລົດຊາດເຜັດແລະເຄັມ.ໃນເວລາມີແຂກນອນຢາມແມ່ນໃຫ້ແຂກກິນເຂົ້າກ່ອນເຈົ້າຂອງເຮືອນຈຶ່ງກິນຕາມຫຼັງບໍ່ໃຫ້ວາງພາເຂົ້າຊື່ຂື່ເຮືອນ ແລະ ນັ່ງຢ່ອງຢໍ້ເວລາກິນເຂົ້າ. ເຂົາເຈົ້າດື່ມນ້ຳດິບ, ດື່ມເຫຼົ້າໄຫ ແລະ ສູບຢາເສັ້ນປຸກທີ່ສຸດ.



# ຄວາມເຊື່ອຖື

ກ່ອນໜ້ານີ້ 100 ກວ່າປີຊົນເຜົ່າ ມະກອງ ໄດ້ເຊື່ອຜີຊຶ່ງລວມມີຜີຕ່າງໆຄື: ຜີປູ່ຍ່າ, ຕາຍາຍ, ຜີພໍ່ແມ່, ອ້າຍ, ນ້ອງ. ຖ້າຫາກບໍ່ທັນ ເຮັດລາປົບມັນພົວພັນເຖິງຫຼາຍດ້ານເປັນຕົ້ນ: ແຕ່ງດອງບໍ່ແລ້ວຂຶ້ນເຮືອນພໍ່ເຖົ້າບໍ່ໄດ້. ນອກຈາກຜີທີ່ກ່າວມານັ້ນແລ້ວຍັງມີຜີຟ້າ, ຜີແຖນ, ຜີໝໍ, ຜີປົວ, ຜີເຂົ້າເປັນຜີທີ່ເຮັດໃຫ້ຊົນເຜົ່າ ມະກອງ ເກີດລູກຢູ່ເຮືອນບໍ່ໄດ້, ຜີກະຈາດ, ຜີອາຍະຍຽງແດງ, ຜີປາເຂິງ, ຜີໝາ ແລະ ຜີອື່ນໆ. ນອກຈາກນັ້ນ, ແຕ່ລະຄອບຄົວຍັງມີຜີລວມຂອງບ້ານຄື: ຜີບ້ານ "ຜີມະເຫສັກ", ປັດຈຸບັນໄດ້ມີການປ່ຽນແປງເປັນຕົ້ນ: ມີຫຼາຍບ້ານໄດ້ເຄົາລົບນັບຖືພຸດທະສາສະໜາ ແລະ ເຊື່ອຖືຜີອີກດ້ວຍ. ຊົນເຜົ່າມະກອງໄດ້ມີຮີດຄອງທີ່ພົວພັນເຖິງການຜະລິດໃນປີໜຶ່ງເຊັ່ນ: ພິທີກຳຈ້ຳຜີແມ່ນເວລາປຸກເຮືອນ, ຖ້າເຮັດເຮືອນໄມ້ແປ້ນຕ້ອງໄດຂ້າໝູ, ງົວ, ຄວາຍ. ສະຫຼອງ ແລະ ກ່ອນຈະຖາງປ່າເຮັດໄຮ່, ເສຍຫຍ້າ, ຮູດເຂົ້າ, ເກັບຜົນລະປູກ, ຂົນເຂົ້າຂຶ້ນເລົ້າ, ຄວາຍ, ງົວ ຈະເກີດລູກ, ຈະຂາຍສັດລຽ້ງທຸກຊະນິດ, ໄດ້ເງິນ, ຄຳ ແລະ ໄດ້ລູກໃໝ່ກໍຕ້ອງຂ້າໝູ. ໃນຮອບວຽນປີໜຶ່ງໆຂອງເຂົາເຈົ້າຈະມີການຈັດງານເຊັ່ນ: ເດືອນ 5 ເຮັດບຸນດຳໄພມີການຄົບງັນກິນງົວ, ຄວາຍສະເຫຼີມສະຫຼອງໜຶ່ງວັນ, ເດືອນ 8 ບຸນກິນແຕຣມີການຂ້າໝູ, ໄກ່ ໃນແຕ່ລະເຮືອນ ແລະ ເດືອນ 12 ມີການຈັດງານເອີ້ນວ່າ: "ກິນງະ". ຊົນເຜົ່າ ມະກອງ ໄດ້ມີເຖົ້າແກ່, ມີລ່າມຜູ້ເປັນເຈົ້າຮີດຂອງແຕ່ລະບ້ານ, ເຖົ້າແກ່ອາວຸໂສນັ້ນເປັນຜູ້ຄວບຄຸມຕະກຸນຂອງຕົນ ແລະ ການສຳພັນກັບຕະກຸນອື່ນໃນເວລາງານບຸນ ແລະ ຄົນເສຍຊີວິດ, ເຂົາເຈົ້າໄດ້ມີຊັ້ນຄົນ, ປັນຍາຊົນ, ເຈົ້າກົກ, ເຈົ້າເຫຼົ່າ, ຜູ່ຊົງຄຸນວຸດທິທີ່ມີອິດທິພົນອັນສຳຄັນຕໍ່ຊາວບ້ານ.



ພາບໂດຍ: ແນວລາວສ້າງຊາດ ເມືອງ ເຊໂປ ແຂວງ ສະຫວັນນະເຂດ



# ສິນລະປະພື້ນເມືອງ

ຊົນເຜົ່າ ມະກອງ ມີສິລະປະວັນນະຄະດີເປັນຕົ້ນ: ຄຳຜະຫຍາ ສຸພາສິດກອນຂັບລຳ ຫຼື ມ່ວນຊື່ນຕາມປະເພນີ, ມີວາດຟ້ອນໄປຕາມ ຈັ່ງຫວະລຽ້ງຜີ ແລະ ອື່ນໆ.

# ພາສາປາກເວົ້າ

ຊົນເຜົ່າ ມະກອງ ບໍ່ມີຕົວໜັງສືຂຽນແຕ່ມີພາສາປາກເວົ້າເປັນ ອັນສະເພາະຂອງຕົນຊຶ່ງຈັດເຂົ້າໃນໝວດພາສາ ມອນ-ຂະແມ, ສາຂາ ພາສາບູຣອິກ ຫຼື ມອນບູຮານ.ພວກເຂົາເຈົ້າສາມາດເວົ້າພາສາຂອງ ຊົນເຜົ່າ ກະຕາງ, ຕີຣ, ຕະໂອ້ຍ, ຊ່ວຍ, ກາໂດ, ກາໄນ, ປະໂກະ, ພາສາ ລາວ ແລະ ພາສາຕ່າງປະເທດ ຊຶ່ງມີຄວາມສະດວກໃນການພົວພັນ ແລກປ່ຽນເສດຖະກິດ ແລະ ວັດທະນະທຳພາຍໃນ ແລະ ຕ່າງປະເທດ ນັບມື້ນັບກວ້າງຂວາງ.

# ການສົມທຽບ
# ພາສາ ລາວ ກັບ ພາສາ ມະກອງ

| ລຳດັບ | ພາສາ ລາວ | ພາສາ ມະກອງ |
|---|---|---|
| 01 | ສະບາຍດີ | ບັນຊວນ |
| 02 | ຂອບໃຈ | ຊະເອີນ |
| 03 | ຂໍໂທດ | ເຊໂລຍ |
| 04 | ເຈົ້າຊື່ຫຍັງ? | ເມື້ອຍລະເມີນເດົາ? |
| 05 | ເຮັດຫຍັງຢູ່? | ເອີຕະເຖົາ? |
| 06 | ກິນເຂົ້າແລ້ວບໍ? | ຈາໂດຍໄຊເຈີ? |
| 07 | ລາກ່ອນ | ຈູນໍ່ |
| 08 | ພົບກັນໃໝ່ | ຕູນລະເມົາຕະໄນເອນ |
| 09 | ບໍ່ເປັນຫຍັງ | ຕະເບີນກັນເດົາ |
| | | |

*ຂໍ້ມູນໂດຍ: ແນວລາວສ້າງຊາດ ເມືອງ ເຊໂປ ແຂວງ ສະຫວັນນະເຂດ*